
ຄາຖາທັມມະບົທ

ແປປະກອບພາບ

ILLUSTRATED DHAMMAPADA

TREASURY OF TRUTH

Lao, French, English & Pali Version



ຄາຖາທັມມະບົທ
ແບບປະກອບພາບ

ILLUSTRATED DHAMMAPADA

(Lao, French, English & Pali Version)



TREASURY OF TRUTH




(Lao, French, English & Pali Version)

VEN. WERAGODA SARADA MAHA THERO

Author - Publisher

Printed and donated for free distribution by
The Corporate Body of the Buddha Educational Foundation
11F., 55 Hang Chow South Road Sec 1, Taipei , Taiwan , R.O.C
Tel: 886-2-23951198, Fax: 886-2-23913415
Email: overseas@budaedu.org
Website: http://www.budaedu.org



Venerable Weragoda Sārada Mahā Thēro, the Author of The Treasury of Truth (Illustrated Dhammapada) was born in Sri Lanka in 1941. He was ordained a Buddhist monk in 1953, when he was just 12.


He graduated from the Vidyodaya University of Ceylon (Now Sri Jayawardenepura University, Sri Lanka) in 1964. Proficient in Pāli, Sanskrit, Sinhala and Buddhism, he was the Principal of Indurupathvila University College from 1965 to 1967 and also of Suddharmārama University College from 1967 to 1969.

Starting his mission of service to International Buddhism and to the spread of the Buddha-word worldwide, Ven. Sārada Mahā Thero, left Sir Lanka for Penang, Malaysia in 1969. There, he was Principal of the Mahindarama Sunday Pāli school until 1979.

In 1979, he came over to Singapore and founded The Singapore Buddhist Meditation Centre. Currently too he is the Chief Resident Monk of the Centre. One of the Founders of American Sri Lanka Buddhist Association, Ven. Sārada Thero is still the Director of that Association.

Ven. Sārada Mahā Thero is the Founder President of Japan-Sri Lanka Buddhist Centre. He is currently the General-Secretary of that Association. He is the Chief Incumbent Monk of the Jayanthi Viharaya, Weragoda, Sri Lanka.

The most outstanding service Ven. Sārada Mahā Thero renders to the Teaching of the Buddha is the publication of books on Buddhism. About a million copies of Buddhist works published by him, have been distributed free, worldwide. Todate, he has published 68 books, of which six have been authored by him. These titles are: Why Fear Death?, The Buddha Word, Meditation on Loving Kindness, Buddhist Way of Meditation, Buddhism for Beginners and Life of the Buddha in Pictures. The last title has proved the most popular of his books so far. His *magnum opus* is the monumental Treasury of Truth, translation of Dhammapada adorned with 423, especially commissioned paintings illustrating each of the 423 verses in Dhammapada.



ສົມເດັຈພຣະຍອດແກ້ວພຸທທຊິໂນຣົສສົກົລມຫາສັງຄປາໂມກຂ໌ທັມມຍານະ

ມຫາເຖຣະ (ບຸນທັນ ບຸປຜຣັຕນ໌) ສົມເດັຈພຣະສັງຄຣາຊາ ແຫ່ງ

ພຣະຣາຊອານາຈັກຣ໌ລາວ

ຄຳປາຣົພໃນການຈັດພິມ

(ຄາຖາພຣະທັມມະບົທແປ ປະກອບພາບ)

ໃນການເຜີຍແຜ່ພຣະທັມວິນັຍ ຄຳສອນຂອງອົງຄ໌ພຣະສັມມາສັມພຸທເຈົ້າໂຄຕະມະ ເພື່ອອົບຮົມບົ່ມນິສັຍຂອງພຸທບໍຣິສັທ ແລະຜູ້ໃຝ່ໃຈໃນຄວາມສງົບສັນຕິທາງດ້ານຈິຕໃຈ ແລະທາງກາຍ ຄາຖາທັມມະບົທ ກໍໄດ້ມີສ່ວນໄດ້ຮັບຄວາມນິຍົມຊົມຊອບ ຈາກທັງຜູ້ໃຫ້ ແລະຜູ້ຮັບ ໄປຄຶດພິຈາຣະນາເພື່ອໃຫ້ເຂົ້າໃຈແຈ້ງຈຸດມຸ່ງໝາຍຂອງພຣະບໍຣົມສາສດາທີ່ຊົງປະສົງມານຳພາສັຕວ໌ໂລກ ທີ່ຍັງບໍ່ທັນຮູ້ສຶກສຳນຶກຕົວໄດ້ເທື່ອ ວ່າຕົນໄດ້ວຽນວາຍຕາຍເກີດ ຕິດຢູ່ໃນກິເລສຕັນຫາ ອຸປາທານຄື ກອງທຸກຂ໌ທັງຫຼາຍທັງປວງຢູ່ໃນວັຕຕະສົງສາຣໃຫ້ໄດ້ເຂົ້າໄປດັບມອດຄວາມທຸກຂ໌ຄວາມຮ້ອນແຫ່ງໄຟກິເລສໃນປັດຈຸບັນຊາຕຄື ພຣະນິພພານ ບໍ່ມີການເກີດແກ່ເຈັບຕາຍອີກຕໍ່ໄປ.

ປະກອບກັບທັງຕ່າງປະເທດຫຼາຍປະເທດກໍໄດ້ຈັດການແປ ຄາຖາທັມມະບົທເປັນພາສາຂອງປະເທດນັ້ນໆ ເພາະຖືກັນໄດ້ວ່າ ເປັນພາກສ່ວນນຶ່ງຂອງພຣະໄຕຣປິດົກ ທີ່ພາໃຫ້ຜູ້ໄດ້ເຫັນໄດ້ອ່ານເກີດຄວາມສົນໃຈ ເພາະເປັນສຳນວນຄວາມເວົ້າທີ່ເຂົ້າໃຈງ່າຍ ແລະມັນກ່ຽວຂ້ອງກັບຊີວິຕຂອງແຕ່ລະຄົນໃນຄອບຄົວ ທີ່ຄວນຈະຫັນປ່ຽນແນວຄິດຈິຕໃຈໄປຕາມວິຖີທາງທີ່ພຣະພຸທອົງຄ໌ໄດ້ຊົງກະທຳເປັນຕົວຢ່າງມາແລ້ວນັ້ນ ແລະກໍໄດ້ມີຜູ້ປະພຶດປະຕິບັດຕາມທັງໃນເວລາທີ່ພຣະອົງຄ໌ມີພຣະຊົນຢູ່ ແລະໃນລະຍະຕໍ່ມາເຊິ່ງປັດຈຸບັນປະຊາຊົນຍິ່ງມີການສົນໃຈໄປທົ່ວທຸກມຸມໂລກ ໃນນັ້ນກໍມີປະເທດສຣີລັງກາໄດ້ຈັດພິມປຶ້ມຄາຖາທັມມະບົທ ມີພາບປະກອບນຳດ້ວຍເປັນພາສາອັງກິດ ຈຶ່ງເປັນໂອກາດອັນດີຍິ່ງ ທີ່ຈະນຳເອົາພາບປະກອບນັ້ນມາປະສົມປະສານກັບຄາຖາທັມມະບົທທີ່ພິມເຜີຍແຜ່ຢູ່ໃນລາວ ເນື່ອງໃນວັນງານສລອງພຣະຊົນມາຍຸຄົບຮອບ ແປດສິບພັນສາ ຂອງອົງຄ໌ສົມເດັຈພຣະສັງຄະຣາຊພຣະທັມມະຍານະມະຫາເຖຣະ ໃນປີ ພ.ສ.2516 (ຄ.ສ.1973).

ພ້ອມກັນນີ້ ຂໍສະແດງຄວາມນັບຖືຮູ້ບຸນຄຸນ ແລະຂອບໃຈແດ່ ພຣະເວຣະໂຄທ ສາຣະທະມຫາເຖຣະ (Ven.Weragoda Sarada Maha Thera) ເຈົ້າຂອງປື້ມຂຸມຊັພທາງໃຈ (ທັມມະບົທປະກອບພາພ) ແລະທ່ານປ.ວິກຣາມະນະຍະກະ(Mr.P.Wickramanayaka) ຜູ້ແຕ້ມພາພ ມານະໂອກາສນີ້ດ້ວຍ.

ຫວັງຢ່າງຍິ່ງວ່າ ຄາຖາທັມມະບົທແປ ປະກອບພາພນີ້ ເປັນຜົລງານທີ່ສຳຄັນອັນນຶ່ງເຊິ່ງຊາວລາວໃນຕ່າງປະເທດໄດ້ຮ່ວມຈິຕຮ່ວມໃຈ ທັງພຣະພິກຂຸສົງຄ໌ ແລະອຸປາສົກອຸປາສິກາ ພ້ອມພາກັນຈັດທຳຂຶ້ນ ດ້ວຍຄວາມເສັຽສລະທັງໃຈກາຍ ແລະປັຈໄຈ ກໍເພື່ອອົບຮົມບົ່ມນິສັຍພຸທບໍຣິສັທ ແລະຜູ້ໄຝ່ໃຈໃນພຣະທັມ ໃຫ້ມີທັງພາສາລາວ ພາສາຝຣັ່ງເສສ ແລະອັງກິດ ເພື່ອປໂຍດໃນປັດຈຸບັນ ແລະອະນາຄົຕ ໃຫ້ສະດວກໃນການສຶກສາຄົ້ນຄວ້າ ໃຫ້ເຂົ້າໃຈລະອຽດຖີ່ຖ້ວນ ເປັນມູນມໍຣະດົກ ເປັນຂຸມຊັພທາງໃຈໄວ້ໃນແຕ່ລະຄອບຄົວ ເໝືອນປື້ມສາຣານຸກົມຂອງປະເທດອື່ນທີ່ພັທນາແລ້ວນັ້ນ ສືບຕໍ່ໄປ.

ຄະນະຈັດທຳ
ວັດພຣະຍອດແກ້ວທັມມະຍານາຣາມ
ທີ່ນະຄອນຊິດນີ ເດືອນ ທັນວາ ພ.ສ.2540

Foreword for Printing
(the illustrated and translated Dhammapada)

In the spreading of Dhammavinaya, the teachings of the Lord Buddha Gotama, to instill good behaviour in Buddhists and in those seeking spiritual and physical peace, the Dhammapada has deserved its share of appreciation from both the preachers and listeners alike. It has made them think in order to clearly understand the aim of the Teacher who was willing to lead the human world who were still not aware that they had been in the cycle of life and death, clung to desires, cravings, illusions, ie all sorts of sufferings in this cycle of rebirth, to find ways of extinguishing all desires and its causes now for the ultimate realisation of Nirvana, where there is no more rebirth, old age, sickness and death.

Many foreign countries have also translated the Dhammapada into their own languages as they believe it is part of the Tripitaka. The latter has caused interest in those who have seen or read it, for it is easy to understand and is related to each and everyone's life in the family who should turn their thoughts to follow the Lord Buddha's ways as examples. When He was still living, there were people practising His ways and they did so for centuries later. Now there are people in every part of the world who are interested in Buddhism. One of these countries is Sri Lanka which has printed an English version of the Dhammapada. It is called ***Treasury of Truth***, Illustrated Dhammapada. This book provides an excellent opportunity for us to use the illustrations to complement the Lao version of the Dhammapada, printed in Laos to commemorate the 80th anniversary of the Lao Sangha Raja, Phra Dhammayana Maha Thera in the year B.E.2516(1973). Grateful appreciation and thanks are due to Ven. Weragoda Sarada Maha Thera, author and publisher of the Treasury of Truth, and to Mr P. Wickramanayaka, the illustrator.

We trust that the work of translating the English version of the Illustrated Dhammapada into Lao and French is an important work, co-ordinated by shared physical and financial efforts of the Lao Community in Australia, including the Sangha and Lay Buddhists. The purpose of the work is to instill good behaviour in Buddhists and in those seeking the Dhamma and to make it availabe for present and future research and study in order to have a deep understanding of the Dhammapada as a heritage and treasury of truth for each and every Lao family like an encyclopedia in the developed countries.

The Work Committee
Wat Prayortkeo Dhammayanarm
Sydney, Australia
1997

ພຣະຣາຊອານາຈັກລາວ

ສຳນັກສົມເດັຈພຣະສັງຄະຣາຊ
ຫຼວງພຣະບາງ ເລຂທີ່ 27/ສຣ

ສຳນັກວັດໃໝ່ ສຸວັນນະພູມາຣາມ
ວັນທີ່ 12 ທັນວາ ຄ.ສ.1972

ຄຳອະນຸໂມທະນາ

ຂອງ

ສົມເດັຈພຣະສັງຄະຣາຊ (ທັມມະຍານະມຫາເຖຣະ)

ອາຕະມາພາບເຄີຽຕັ້ງປະນິທານໄວ້ວ່າ ຢາກເຫັນພຣະໄຕຣປິດົກ ອັນເປັນຄຳສອນສຳຄັນຍິ່ງຂອງພຣະພຸທອົງ ເປັນສະບັບພາສາລາວ ຈຶ່ງໄດ້ພະຍາຍາມຊື້ຊວນຜູ້ມີຄວາມຮັບຜິດຊອບ ແລະມີຄວາມຮູ້ ໃຫ້ເຫັນປໂຍດຮ່ວມກັນ ຈັດແປພຣະໄຕຣປິດົກ ແລະພິມໃຫ້ແລ້ວເສັດຢ່າງໜ້ອຍກໍ່ປິດົກລະຫົວ ໃຫ້ທັນກັບວັນເກີດຄົບຮອບແປດສິບປີ (໘໐ ປີ) ເຖິງຄວາມຫວັງນີ້ຍັງບໍ່ເປັນໝາກເປັນຜົນສົມບູນກໍ່ຕາມ ແຕ່ດ້ວຍຜລານິສົງ ແຫ່ງຄວາມຕັ້ງໃຈດີເດີມ ກໍ່ມາຈວບເໝາະທີ່ຜູ້ໃຈບຸນເຫັນປໂຍດຮ່ວມຄນະໜຶ່ງ ໄດ້ຈັດແປ ແລະລຽບລຽງຄາຖາພຣະທັມມະບົທເປັນ 4 ພາສາ ສເນີໃຫ້ຈັດພິມ ເນື່ອງໃນວັນຄ້າຍວັນເກີດ ເຫັນວ່າເປັນເໝາະດີ ແລະຖືກກັບຄວາມຕັ້ງໃຈໄວ້ ເພາະທັມມະບົທນັ້ນ ກໍ່ແມ່ນພາກສ່ວນນຶ່ງຂອງພຣະໄຕຣປິດົກໂດຍກົງ ດັ່ງນັ້ນງານອັນເປັນມະຫາກຸສົນນີ້ ຈຶ່ງໄດ້ຮັບຄວາມຮ່ວມມືເປັນຢ່າງດີຍິ່ງ ຈາກສາທຸຊົນຜູ້ເຫັນການໄກຈຳນວນຫຼາຍ ຄື ຄນະເຍົາວະພຸທທິກະສະມາຄົມ ແຫ່ງພຣະຣາຊອານາຈັກລາວ ສະມາຄົມສິລປະວັນນະກັມລາວ ແລະໂດຍສະເພາະສຳນັກງານການພິມລາວ ຊຶ່ງໄດ້ປະກອບສ່ວນໃຫ້ພາຣະອັນປະເສີດນີ້ສຳເລັດມາດ້ວຍດີ ຊຶ່ງບໍ່ພຽງແຕ່ຈະເປັນການເຜີຍແຜ່ຫຼັກພຸທສາສນາເຂົ້າໄປເຖິງປະຊາກອນຂອງໂລກຢ່າງກວ້າງຂວາງທໍ່ນັ້ນ ແຕ່ຍັງເປັນການບັນທຶກພຣະໄຕຣປິດົກລົງເປັນພາສາລາວ ແລະພາສາລະຫວ່າງຊາຕ ໃນປຶ້ມດຽວ ເປັນຫຼັກຖານໄວ້ເປັນກຽຕອັນດີງາມຂອງຊາຕ ສາສນາເຮົາອີກດ້ວຍ.

ກ່າວໄດ້ວ່າ ພຣະທັມມະບົທນີ້ ເປັນຫຼັກທັມໃນພຣະພຸທສາສນາ ທີ່ສາມາດນຳໄປໃຊ້ໄດ້ ສຳລັບຄົນທຸກຊົນຊັ້ນ ແລະເພດໄວຍ໌ ໃນກາລະທຸກເມື່ອ ທຸກສະຖານທີ່ ໂດຍສະເພາະຄອບຄົວຊາວພຸທແລ້ວກໍ່ຄວນຈະມີຄາຖາພຣະທັມມະບົທນີ້ ໄວ້ເປັນສະເໝືອນ ກັລຍານະມິດ ຫຼື ເປັນທີ່ປຶກສາຂອງຊີວິຕນາວາ ແລ້ວທ່ານຈະເດີນໄປໃນທະເລແຫ່ງວັຕຕະສົງສານ ຢ່າງມີນາຍທາງ ມີເຂັມທິດຊີ້ທາງເປັນຢ່າງດີສືບໄປໄດ້.

ອາຕະມາພາບຈຶ່ງຂໍອະນຸໂມທະນາ ແລະຂໍອານຸພາບແຫ່ງທັມມະທານ ທີ່ທຸກທ່ານໄດ້ມີສ່ວນຮ່ວມ ຈົ່ງເປັນກຳລັງແຮງຊຸກຍູ້ໃຫ້ທ່ານນັ້ນໆ ໄດ້ຮັບແຕ່ຄວາມວຸທິຈຳເຣີນ ແລະລຸເຖິງເຊິ່ງຄວາມພົ້ນທຸກຂ໌ໃນວັຕຕະສົງສານ ໂດຍທົ່ວກັນເທີ້ນ./.

ຂໍຈະເຣີນພອນມາດ້ວຍເມຕຕາທັມ

ສົມເດັຈພຣະພຸດທະຊິໂນຣົສ

ສົມເດັຈພຣະສັງຄະຣາຊ (ທັມມະຍານະມຫາເຖຣະ)

ພຣະຣາຊອານາຈັກລາວ

ສຳນັກງານນາຍົກຣັຖມົນຕຣີ

ວຽງຈັນ ວັນທີ່ 9 ທັນວາ 1972

ທັມມະ ຄື ຄວາມໄຕ່ຕອງຜ່ອງໃສ ດັ່ງຣັຕນະມະນີທີ່ຫຼັ່ງໄຫຼ ປະດຸຈະດັ່ງກະແສນ້ຳ ອອກມາແຕ່ພຣະໂອດ ຂອງອົງສັມມາສັມພຸທທະເຈົ້າ ໂດຍທຳນອງເທສນາ ຢ່າງພຣະມະຫາກະຣຸນາທິຄຸນໂຜດສັຕະໂລກທັງປວງນັ້ນ ກໍມີຣວບຣວມເອົ້າເອົາໄວ້ໃນພຣະຄຳພີອັນມີຊື່ວ່າ ພຣະໄຕຣປິດົກ.

ສຳນວນຄວາມເວົ້າຢ່າງສວຍສົດງົດງາມປຣານີດ ອັນມີຢູ່ໃນຕົ້ນເຄົ້າເຫງົ້າມູນແຫ່ງພຸທທະວັຈະນະ ເປັນພາສາປາລີນັ້ນ ເຮົາບໍ່ຮູ້ເລີຍວ່າ ຈະຫາເອົາຄວາມເວົ້າຄວາມໃດໃຫ້ເໝາະສົມພຽງພໍ ມາແປອອກໃຫ້ໄດ້ຢ່າງຖືກຕ້ອງແທ້ແນ່ນອນ.

ພາສາລາວມີຣາກເຫງົ້າຢູ່ໃນພາສາປາລີ ເພາະສະນີ້ ຈຶ່ງພໍມີຊ່ອງທາງມາກຢ່າງໃຫ້ໄດ້ຂໍ້ຄວາມພໍທີ່ຈະນຳເອົາມາແປພາສາປາລີທີ່ກ່າວມາບົນນີ້ໃຫ້ໄດ້.

ເຣື່ອງນິທານ ທັມມະບົທນີ້ ເປັນພາກໃຫຍ່ສ່ວນນຶ່ງຂອງ ພຣະໄຕຣປິດົກ. ການແປພຣະໄຕຣປິດົກອອກມາເປັນພາສາລາວ ກໍນັບໄດ້ວ່າແມ່ນບາດກ້າວໃຫຍ່ບາດນຶ່ງໃນດ້ານວັນນະກັມຝ່າຍທັມມະ ທີ່ໃນປະເທດລາວ.

ການແປ ພຣະໄຕຣປິດົກ ຄັ້ງນີ້ ຖືໄດ້ວ່າເປັນຣືກງານຍາມດີ ເພາະເປັນໂອກາດເກີດຂຶ້ນຮ່ວມຍາມກັນກັບ ກາລະງານສລອງ ພຣະຊົນມາຍຸ ຄົບຮອບ ແປດສິບພັນສາ ຂອງອົງສົມເດັຈພຣະສັງຄະຣາຊແຫ່ງພຣະຣາຊອານາຈັກລາວ ກ່າວຄື ອົງສົມເດັຈພຣະທັມມະຍານະມະຫາເຖຣະ.

ຂໍຕັ້ງອະທິຖານໃຫ້ກິຈກັມທີ່ເລີ້ມທຳຂຶ້ນຄັ້ງນີ້ ຈົ່ງດົນບັນດານໃຫ້ບັງເກີດຄວາມສັນຕິ ມີສຸຂທຸກປະການ, ຄວາມກົມກຽວຖືກຕ້ອງປອງດອງກັນ ລະຫວ່າງມວນມະນຸດໃນໂລກ ແລະຍົກຣະດັບຄວາມຮູ້ສຶກສຳນຶກບໍຣິບູນ ດ້ານສິລທັມ, ດ້ານພຸທທິປັນຍາ ແລະ ດ້ານສັງຄົມຂອງແຕ່ລະປະເທດ ໂດຍຂໍໃຫ້ເກີດມີຈິຕໃຈອ່ອນນ້ອມໃນຄອງທັມຍິ່ງໆຂຶ້ນໄປເທີ້ນ./.

ສເດັດເຈົ້າສຸວັນນະພູມາ

(ເຈົ້າກຼົມມະນາ)

ຄຳພາຣົບໃນການຈັດພິມ

ໂດຍໄດ້ຮັບມອບໝາຍຈາກສາທຸໃຫຍ່ ພຣະຫຼູກຄຳສຸວັນນະບຸຣີສີຄະນາຈາຣຍ໌ ເລຂານຸການໃນອົງສົມເດັຈພຣະສັງຄະຣາຊ (ທັມມະຍານະມຫາເຖຣະບຸນທັນ) ໃຫ້ຄັດເລືອກໜັງສືທີ່ສຳຄັນຢ່າງໃດຢ່າງໜຶ່ງ ຈັດພິມທູນຖວາຍອົງສົມເດັຈ ເນື່ອງໃນໂອກາດສລອງພຣະຊົນມາຍຸຄົບຮອບ 80 ປີ ຊຶ່ງຈະມາເຖິງໃນວັນທີ່ 8 ກຸມພາ 2515 (1973) ນີ້.

ຍ້ອນຄຳແນະນຳ ແລະກະຕຸ້ນເຕືອນອັນມີຄ່າຍິ່ງຈາກ ພນະທ່ານແກ້ວ ວິພາກອນ ປັດຈຸບັນເປັນເອກອັຄຣາຊທູດລາວປະຈຳບາງກອກ ຊຶ່ງເປັນຜູ້ບັງຄັບບັນຊາ ເປັນເວລາກວ່າ ສິບ ປີ ຂອງຂ້າພະເຈົ້າ ໆ ຮ່ວມກັບຄນະ ໄດ້ແປ ແລະລຽບລຽງຄາຖາທັມມະບົທ ຈະຕຸຣະພາກ (4 ພາກ) ແລະເຄີຍສເນີກອງປະຊຸມ ເຍົາວະພຸທທິກະສະມາຄົມແຫ່ງພຣະຣາຊອານາຈັກລາວ (ຂນະນັ້ນ ພນະທ່ານພະຍາອິນແປງ ສຸຣິຍະໄທ ເປັນປະທານ) ກອງປະຊຸມໄດ້ຮັບຫຼັກການໃຫ້ຈັດພິມ ແຕ່ຍັງຂາດທຶນຊັບ ຈຶ່ງບໍ່ໄດ້ຈັດພິມຂຶ້ນ ເທື່ອນີ້ຂ້າພະເຈົ້າຈຶ່ງໄດ້ນຳໜັງສືນີ້ຂຶ້ນສເນີໆ ແລະຄວາມໄດ້ຊາບເຖິງອົງສົມເດັຈ ແລ້ວເປັນທີ່ພໍພຣະໄທຍິ່ງ.

ສະນັ້ນ ເນື່ອງໃນໂອກາດອັນເປັນອຸດົມມຸງຄຸນນີ້ ທ່ານນາຍພົນທັນ ໄຊຍະສິດເສນາ ປະທານເຍົາວະພຸດທິກະສະມາຄົມແຫ່ງພຣະຣາຊອານາຈັກລາວ ຮ່ວມກັບສະມາຄົມສິລປະວັນນະກັມລາວ (ຊຶ່ງມີທ່ານທອງໄປໄຊຍະຣາຊ ແລະທ່ານມະຫາສີລາ ວີຣະວົງ ຮອງປະທານ ທຳໜ້າທີ່ປະທານແທນທ່ານຄຳຈັນ ປະດິດ ປັດຈຸບັນເອກອັຄຣາຊທູດລາວປະຈຳອົສຕຣາລີ) ໄດ້ຮັບເປັນຜູ້ຈັດພິມຖວາຍ ໂດຍໄດ້ຮັບຄວາມອຸປະຖັມດ້ານຄ່າພິມຈາກພຸທບໍຣິສັດຜູ້ມີສັດທາ ແລະຈຳນວນນຶ່ງຈາກມູນນຸທິອາຊີປະຈຳລາວ (**Asia Foundation**) ຊຶ່ງມີທ່ານແມກກຸການ ເປັນຜູ້ອຳນວຍການ ແລະໄດ້ຮັບຄວາມຮ່ວມມືດ້ານການຈັດຕົ້ນສະບັບຢ່າງເອົາໃຈໃສ່ຂອງຄນະກັມມະການ ຊຶ່ງມີ ພຣະມະຫາກ້າວ ທັມມະໂຄສໂກ **M.A.** ເປັນປະທານ (ດັ່ງບັນຊີຂ້າງທ້າຍ) ໂດຍສະເພາະທ່ານມະຫາຈັນ ອິນທຸພິລາສ ໄດ້ຈັດຮ່າງຄຳແປພາສາລາວ ແລະບັນທຶກທ້າຍເຫຼັ້ມໃຫ້ເປັນຢ່າງດີດ້ວຍ.

ການແປລຽບລຽງພຣະທັມມະບົທ ຈຕຸຣະພາກນີ້ ພາສາຝຣັ່ງ ແລະອັງກິດ ໄດ້ອາໄສຕົ້ນສະບັບຂອງສະມາຄົມ ສະຫາຍພຸທສາສນາແຫ່ງປາຣີ ແລະຂອງທ່ານພິກຂຸນາຣະທະ ມຫາເຖຣະ ຊຶ່ງສະມາຄົມມະຫາໂພທິແຫ່ງປະເທດອິນເດັຽໄດ້ຈັດພິມນັ້ນ ເປັນຫຼັກ.

ໃນນາມຄນະກັມມະການຜູ້ແປ ລຽບລຽງຄະຖາທັມມະບົທຈຕຸຣະພາກນີ້ ຈຶ່ງຂໍຂອບບຸນຄຸນທຸກທ່ານທີ່ໄດ້ເສັຽສລະ ກຳລັງສະຕິປັນຍາ ກຳລັງກາຍ ແລະກຳລັງຊັບ ຈັດເຣັດ ແລະກວດແກ້ຕົ້ນສະບັບ ຈົນໃຫ້ງານອັນມີຄ່ານີ້ ສຳເຣັດລົງດ້ວຍດີ.

ເນື່ອງຈາກເວລາຈັດພິມງານໃຫຍ່ ແລະລະອຽດນີ້ ມີຈຳກັດ ຈຶ່ງເຊື່ອວ່າ ຈະມີການຜິດພາດຂາດຕົກບົກພ່ອງ ບໍ່ຫຼາຍກໍ່ໜ້ອຍ ສະນັ້ນ ຄວາມຜິດພາດຂາດຕົກໃດໆຫາກມີ ກໍ່ເປັນຄວາມຜິດຂອງຂ້າພະເຈົ້າຜູ້ດຽວ ແຕ່ຫາກຄວາມດີໃດໆ ຈະພຶງມີຈາກການພິມນີ້ ຂໍໃຫ້ທຸກທ່ານທີ່ມີສ່ວນຮ່ວມຈົ່ງໄດ້ຮັບສ່ວນກຸສົນນັ້ນໂດຍທົ່ວກັນ ແລະຂໍໃຫ້ເປັນພະລັງເພີ່ມພູນ ໃຫ້ອົງສົມເດັຈພຣະສັງຄະຣາຊ ໄດ້ຊົງມີພະລານາມັຍແຂງແຮງ ຊົງດຳຣົງຢູ່ເປັນຮົ່ມໂພທິ ເປັນມິ່ງຂວັນຂອງພຸທບໍຣິສັດ ພຣະຣາຊອານາຈັກລາວ ຍືງຍືນນານສືບໄປດ້ວຍເທີ້ນໆ./.

ສຳນັກງານການພິມລາວ ວຽງຈັນທນ໌ 6 ກຸມພາ 1973
ເລຂານຸການຄນະກັມການຈັດແປ ແລະລຽບລຽງຕົ້ນສະບັບ
ຜູ້ອຳນວຍການສຳນັກງານການພິມລາວ
ບຸນຖິ່ມ ຈັນທະມົນຕຣີ
(ບຸນຖິ່ມຈັນທະມົນຕຣີ)
ເລຂາທິການເຍົາວະພຸດທິກະສະມາຄົມ
ແຫ່ງພຣະຣາຊອານາຈັກລາວ.


ຄາຖາທັມມະບົທ

ແປປະກອບພາບ

TREASURY OF TRUTH

ILLUSTRATED

DHAMMAPADA



By Ven. Weragoda Sarada Maha Thero

"Wherever the Buddha's teachings have flourished,
either in cities or countrysides,
people would gain inconceivable benefits.
The land and pepole would be enveloped in peace.
The sun and moon will shine clear and bright.
Wind and rain would appear accordingly,
and there will be no disasters.
Nations would be prosperous
and there would be no use for soldiers or weapons.
People would abide by morality and accord with laws.
They would be courteous and humble,
and everyone would be content without injustices.
There would be no thefts or violence.
The strong would not dominate the weak
and everyone would get their fair share."

~THE BUDDHA SPEAKS OF
THE INFINITE LIFE SUTRA OF
ADORNMENT, PURITY, EQUALITY
AND ENLIGHTENMENT OF
THE MAHAYANA SCHOOL~

ສາລະບານຫຍໍ້ເລື່ອງ

1. *ຍະມະກະ ວັຄ* : YAMAKA VAGGA (Twin verses)

* ຄາຖາທີ 1-20 ວັຄວ່າດ້ວຍພະລັງອິທທິຣິທສົມທຽບກັນ 1-20

2. *ອັປປະມາທະ ວັຄ* : APPAMADA VAGGA (Heedfulness)

* ຄາຖາທີ 21-32 ວັຄວ່າດ້ວຍ ຄວາມບໍ່ປະມາທ ຄວາມບໍ່ເລີນເລີ້ເພີດົວ 21-32

3. *ຈິດຕະ ວັຄ* : CITTA VAGGA (The Mind)

* ຄາທາທີ 33-43 ວັຄວ່າດ້ວຍ ຈິດໃຈທີ່ ຮູ້ ຄິດ ນຶກ 33-43

4. *ປຸປພະ ວັຄ* : PUPPHA VAGGA (Flowers)

* ຄາຖາທີ 44-59 ວັຄວ່າດ້ວຍ ດອກໄມ້ ຂອງຫອມ ກິ່ນຫອມ 44-58

5. *ພາລະ ວັຄ* : BALA VAGGA (Fools)

* ຄາຖາທີ 60-75 ວັຄວ່າດ້ວຍ ຄົນພາລ ຄົນເກເຣ ຄົນເກະກະ ຄົນຊົ່ວຊາມ 59-74

6. *ປັນທິຕະ ວັຄ* : PANDITA VAGGA (The wise)

* ຄາຖາທີ 76-89 ວ່າດ້ວຍ ຜູ້ຊົງຄວາມຮູ້ ຜູ້ມີປັນຍາ ນັກປຣາຊ ບັນດິຕ 75-89

7. *ອະຣະຫັນຕະ ວັຄ* : ARAHANTA VAGGA (The Worthy)

* ຄາຖາທີ 90-99 ວັຄວ່າດ້ວຍ ອະຣິຍະຊົນ ຜູ້ມີຄຸນທັມສູງພິເສສ 90-99

8. *ສະຫັສສະ ວັຄ* : SAHASSA VAGGA (The Thousands)

* ຄາຖາທີ 100-115 ວັຄວ່າດ້ວຍ ການສົມທຽບ ຈຳນວນຮ້ອຍຈຳນວນພັນ 100-112

9. *ປາປະ ວັຄ* : PAPA VAGGA (Evil)

* ຄາຖາທີ 116-128 ວັຄວ່າດ້ວຍ ບາບ ຄວາມຊົ່ວ ຄວາມບໍ່ດີ ຄວາມມົວໝອງ 113-125

10. *ທັນທະ ວັຄ* : DANDA VAGGA (The rod or Punishment)

* ຄາຖາທີ 129-145 ວັຄວ່າດ້ວຍ ໂທສ ການລົງໂທສ ການຄາດໂທສ 126-142

11. *ຊະຣາ ວັຄ* : JARA VAGGA (Old age)

* ຄາຖາທີ 146-156 ວັຄວ່າດ້ວຍ ຄວາມແກ່ເຖົ້າ ຄວາມຫ່ຽວແຫ້ງ ຄວາມເສື່ອມໄປ 143-153

12. *ອັຕຕະ ວັຄ* : ATTA VAGGA (The self)

* ຄາຖາທີ 157-166 ວັຄວ່າດ້ວຍ ຕົນເອງ ເຮັດດີ ເຮັດຊົ່ວ ເຮັດບຸນ ເຮັດບາບ ດ້ວຍຕົນເອງ 154-163

13. *ໂລກະ ວັຄ* : LOKA VAGGA (The world)

* ຄາຖາທີ 167-178 ວັຄວ່າດ້ວຍ ຄວາມປະພຶດຂອງຄົນໃນສັງຄົມໂລກມະນຸສ 164-175

14. *ພຸທທະ ວັຄ* : BUDDHA VAGGA (The Buddha Enlightened one)

* ຄາຖາທີ 179-196 ວັຄວ່າດ້ວຍ ຜູ້ມີຄຸນທັມສູງພິເສສ ຜູ້ຮູ້ ຜູ້ຕື່ນ ຜູ້ເບີກບານ 176-190

15. *ສຸຂະ ວັຄ* : SUKKA VAGGA (Happiness)

* ຄາຖາທີ 197-208 ວັຄວ່າດ້ວຍ ຄວາມສຸຂສະບາຍກາຍສະບາຍໃຈ 191-202

16. *ປິຍະ ວັຄ* : PIYA VAGGA (Affection)

* ຄາຖາທີ 209-220 ວັຄວ່າດ້ວຍ ຄວາມຮັກ ຄວາມຊອບໃຈ 203-214

17. *ໂກທະ ວັຄ* : KODHA VAGGA (Anger)

* ຄາຖາທີ 221-234 ວັຄວ່າດ້ວຍ ຄວາມຮ້າຍ ຄວາມໂກທ ຄວາມຂຸ່ນເຄືອງໃຈ 215-227

18. *ມະລະ ວັຄ* : MALA VAGGA (Impurities or Taints)

* ຄາຖາທີ 235-255 ວັຄວ່າດ້ວຍ ຄວາມມົວໝອງ ສົກປົກ ບໍ່ບໍຣິສຸທ ຂຸ່ນມົວ 228-247

19. *ທັມມັຕຖະ ວັຄ* : DHAMMATTHA VAGGA (The just or Righteous)

* ຄາຖາທີ 256-272 ວັຄວ່າດ້ວຍ ຜູ້ຊົງຄຸນທັມ ຜູ້ຕັ້ງຢູ່ໃນທັມ ຜູ້ມີສີລທັມ 248-262

20. *ມັຄຄະ ວັຄ* : MAGGA VAGGA (The way or the path)

* ຄາຖາທີ 273-289 ວັຄວ່າດ້ວຍ ເຫຕ ຫຼື ທາງດຳເນີນໄປສູ່ຜົລແຫ່ງຄວາມດັບທຸກຂ໌ 263-289

21. *ປະກິນນະກະ ວັຄ* : PAKINNAKA VAGGA (Miscellaneous)

* ຄາຖາທີ 290-305 ວັຄວ່າດ້ວຍ ເຣື້ອງຣາວກະຈັດກະຈາຍ 290-295

22. *ນິຣະຍະ ວັຄ* : NIRIYA VAGGA (Hell or woeful state)

* ຄາຖາທີ 306-319 ວັຄວ່າດ້ວຍ ຜົລກັມອັນຊົ່ວສິ່ງໄປສູ່ແດນທຸກຂ໌ທໍຣະມານ 296-309

23. *ນາຄະ ວັຄ* : NAGA VAGGA (The Elephant)

* ຄາຖາທີ 320-333 ວັຄວ່າດ້ວຍ ສັຕຜູ້ປະເສີດ ຜູ້ບໍ່ເຣັດບາບ 310-323

24. *ຕັນຫາ ວັຄ* : TANHA VAGGA (Craving)

* ຄາຖາທີ 334-359 ວັຄວ່າດ້ວຍ ຄວາມທະຍານຢາກ ຄວາມປາຖນາ 324-349
ຄວາມຕ້ອງການ


25. *ພິກຂຸ ວັຄ* : BHIKKHU VAGGA (The Bhikkhu or the Mendicant)

* ຄາຖາທີ 360-382 ວັຄວ່າດ້ວຍ ຜູ້ເຫັນພັຍໃນວັຕຕະສົງສານ ຜູ້ຂໍ 350-372

26. *ພຣາມນະ ວັຄ* : BRAHMANA VAGGA (THe Brahman)

* ຄາຖາທີ 383-423 ວັຄວ່າດ້ວຍ ຜູ້ບຳເພັນພຽນລ່ອງໄຫລບາບເສັຍໄດ້ແລ້ວ 373-413

ຄາຖາພຣະທັມມະບົທແປ
DHAMMAPADA
1. ຍະມະກະ ວັຄ



Suffering pursues the evil-doer, as the cart-wheel the hoof of the draught ox.

1. *Manōpubbaṅgamā dhammā*
manōseṭṭhā manōmayā
manasā cē paduṭṭhēna
bhāsati vā karōti vā
tatō naṁ dukkhamanvēti
cakkaṁ'va vahatō padaṁ (1:1)

(all evil) conditions. Mind is chief;
and they are mind-made.
If, with an impure mind,
one speaks or acts, then pain follows one
even as the wheel, the hoof of the ox.

(1) *ມະໂນປຸພພັງຄະມາ ທັມມາ* *ມະໂນເສຕຖາ ມະໂນມະຍາ*
ມະນະສາ ເຈ ປະທຸຕເຖນະ *ພາສະຕິ ວາ ກະໂຣຕິ ວາ*
ຕະໂຕ ນັງ ທຸກຂະມັນເວຕິ *ຈັກກັງວະ ວະຫະໂຕ ປະທັງ (1.1)*

* ທັມທັງຫລາຍ ມີໃຈເປັນຫົວໜ້າ ມີໃຈເປັນໃຫຍ່ ສຳເຣັດແລ້ວຍ້ອມໃຈ ຖ້າບຸຄຄົລ ມີໃຈຊົ່ວແລ້ວ ພວມເວົ້າຢູ່ກໍຕາມ ພວມເຮັດຢູ່ກໍຊ່າງ (ກໍຊົ່ວ) ຍ້ອມຄວາມຊົ່ວນັ້ນ ຄວາມທຸກຂ໌ຍ່ອມນຳບຸຄຄົລຜູ້ນັ້ນໄປ ດ້ານດັ່ງຕີນກວຽນແລ່ນລ່ຽນນຳຮອຍງົວ ຕົວແກ່ກວຽນໄປຢູ່ ສະນັ້ນ.

En toutes choses, l'élément primordial est le mental; le mental est prédominant; tout provient du mental. Si un homme parle ou agit avec un mauvais mental, la souffrance le suit d'aussi près que la roue suit le sabot du boeuf tirant le char.



Happiness follows the doer of good, as the shadow that leaves not the person.

2. *Manōpubbaṅgamā dhammā*
manōseṭṭhā manōmayā
manasā cē pasannēna
bhāsati vā karōti vā
tatō naṁ sukhamanvēti
chāyā'va anapāyinī. (1:2)

Mind is the fore-runner of (all good) conditions. Mind is chief; and they are mind-made. If, with a pure mind, one speaks or acts, then happiness follows one even as the shadow that never leaves.

(2) *ມະໂນປຸພພັງຄະມາ ທັມມາ*
ມະນະສາ ເຈ ປະທຸຕເຖນະ
ຕະໂຕ ນັງ ສຸຂະມັນເວຕິ

ມະໂນເສຕຖາ ມະໂນມະຍາ
ພາສະຕິ ວາ ກະໂຣຕິ ວາ
ສາຍາວະ ອະນຸປາຍິນີ (1.2)

* ທັມທັງຫລາຍ ມີໃຈເປັນຫົວຫນ້າ ມີໃຈເປັນໃຫຍ່ ສຳເຣັດແລ້ວຍ້ອນໃຈ ຖ້າບຸຄຄົລ ມີໃຈເສາະໃສແລ້ວ ພວມເວົ້າຢູ່ກໍຕາມ ພວມເຮັດຢູ່ກໍຊ່າງ (ກໍເສາະໃສ) ຍ້ອນຄວາມເສາະໃສນັ້ນ ຄວາມສຸຂຍ່ອມນຳຜູ້ນັ້ນໄປ ດ້ານດັ່ງເງົານຳຕົນໄປ ສະນັ້ນ.

En toutes choses, l'élément primordial est le mental; le mental est prédominant. Tout se fait par le mental. Si un homme parle ou agit avec un mental purifié, le bonheur l'accompagne d'aussi près que son ombre inséparable.



The hatred of those who mull over the wrong done to them keeps on growing.

3. *Akkocchi maṁ, avadhi maṁ*
ajini maṁ ahāsi mē
yē taṁ upanayhantī
vēraṁ tēsaṁ na sammati. (1:3)

" He abused me; he beat me,
he defeated me, he robbed me,".
The hatred of those who cherish
such thoughts is not appeased.

(3) *ອັກໂກຈສິ ມັງ ອະວະທິ ມັງ*
ເຍ ຈະ ຕັງ ອຸປະນັຍຫັນຕິ

ອະຊິນິ ມັງ ອະຫາສິ ເມ
ເວຣັງ ເຕສັງ ນະ ສັມມະຕິ (1.3)

* ສ່ວນຄົນທັງຫລາຍເຫລົ່າໃດ ຍ່ອມເຂົ້າໄປຜູກຄວາມຄຽດແຄ້ນໄວ້ວ່າ "ເຂົາໄດ້ດ່າກູແລ້ວ ເຂົາໄດ້ຕີກູແລ້ວ ເຂົາໄດ້ຊນະກູແລ້ວ ເຂົາໄດ້ລັກຂອງໆກູແລ້ວ " ດັ່ງນີ້, ເວຣຂອງຄົນທັງຫລາຍເຫລົ່ານັ້ນ ຍ່ອມບໍ່ຣະງັບດັບລົງໄດ້.

Il m'a vilipendé. Il m'a maltraité. Il m'a rabaissé. Il m'a volé. Chez ceux qui accueillent de telles pensées, le ressentiment ne s'apaise jamais.



Those who do not mull over the harm done to them are appeased.

4. *Akkocchi maṁ avadhi maṁ*
ajini maṁ ahāsi mē
yē taṁ na upanayhanti
vēraṁ tēsūpasammati. (1:4)

" He abused me, he beat me,
he defeated me, he robbed me ".
The hatred of those who do not
cherish, such thoughts is appeased.

(4) *ອັກໂກຈສິມັງ ອະວະທິ ມັງ*
ອະຊິນິ ມັງ ອະຫາສິ ເມ
ເຍ ຈະ ຕັງ ນູປະນັຍຫັນຕິ
ເວຣັງ ເຕສູປະສັມມະຕິ (1.4)

* ສ່ວນວ່າ ຄົນທັງຫລາຍເຫລົ່າໃດ ຍ່ອມບໍ່ເຂົ້າໄປຜູກຄວາມຄຽດແຄ້ນໄວ້ວ່າ " ເຂົາໄດ້ດ່າກູແລ້ວ ເຂົາໄດ້ຕີກູແລ້ວ ເຂົາໄດ້ຊນະກູແລ້ວ, ເຂົາໄດ້ລັກຂອງໆກູແລ້ວ " ດັ່ງນີ້, ເວຣຂອງຄົນທັງຫລາຍເຫລົ່ານັ້ນ ຍ່ອມຣະງັບດັບລົງໄດ້.

" Il m'a vilipendé. Il m'a maltraité. Il m'a rabaissé. Il m'a volé ". Chez ceux qui n'accueillent jamais de telles pensées, le ressentiment n'existe pas.



Hatred never conquers hatred. Only non-hatred conquers hatred.

5. *Na hi vērēna vērāni*
sammantīdha kudācanaṁ
avērēna ca sammanti
ēsa dhammō sanantanō. (1:5)

Hatreds never cease
by hatreds in this world.
By love alone they cease.
This is an ancient Law.

(5) ນະ ຫິ ເວເຣນະ ເວຣານິ
ອະເວເຣນະ ຈະ ສັມມັນຕິ

ສັມມັນຕີທະ ກຸທາຈະນັງ
ເອສະ ທັມໂມ ສະນັນຕະໂນ (1.5)

* ຕັ້ງແຕ່ເປິງໃດໆມາ ເວຣທັງລາຍໃນໂລກນີ້ ຍ່ອມບໍ່ຣະງັບດັບລົງໄດ້ ຍ້ອນ (ການຈອງ) ເວຣ (ຕອບ) ເລີຍ, ແຕ່ວ່າ ຣະງັບດັບລົງໄດ້ ຍ້ອນ (ການບໍ່ຈອງ) ເວຣ (ຕອບ), ທັມນີ້ ເປັນຂອງເກົ່າ.

En verité, la haine ne se détruit pas par la haine. La haine se détruit par l'amour, c'est une loi éternelle.



Some know not that life ends in death. Thought of death prevents quarrelling.

6. *Parē ca na vijānaṇti*
mayamettha yamāmasē
yē ca tattha vijānanti
tatō sammanti mēdhagā. (1:6)

The others know not that in this (quarrel) we perish. Those of them who realise it, have their quarrels calmed thereby.

(6) *ປະເຣ ຈະ ນະ ວິຊານັນຕິ*
ມະຍະເມຕຖະ ຍະມາມະເສ
ເຍ ຈະ ຕັຕຖະ ວິຊານັນຕິ
ຕະໂຕ ສັມມັນຕິ ເມທະຄາ (1.6)

* ຄົນພວກອື່ນ (ຄູ່ຜິດຖຽງກັນ) ຍ່ອມບໍ່ຮູ້ເນື້ອໂຕດອກວ່າ ພວກຕົນກຳລັງຈິບຫາຍ ໃນທີ່ນີ້ ແຕ່ ໃນຄົນໝູ່ນັ້ນ ພວກໃດຮູ້ເນື້ອຄື່ງ ຄວາມຜິດຖຽງກັນ ຍ່ອມສງົບລົງ ຍ້ອນຄົນພວກນັ້ນ.

La plupart des hommes oublient que nous mourons tous un jour. Pour ceux qui y pensent, la lutte est apaisée.



Death overpowers the sensuous, undisciplined and gluttonuous like the wind a weak tree.


7. *Subhānupassiṁ viharantaṁ*
indriyēsu asaṁvutaṁ
bhōjanaṁhi amattaññuṁ
kusītaṁ hīnavīriyaṁ
taṁ vē pasahati mārō
vātō rukkhaṁ'va dubbalaṁ (1:7)

The man who lives
contemplating pleasure,
with senses unrestrained,
in food immoderate, lazy,
inert-him verily, Mara
overthrows as wind, a weak tree.

(7) *ສຸພານຸປັສສິງ ວິຫະຣັນຕັງ* *ອິນທະຣິເຍສຸ ອະສັງວຸຕັງ*
ໂພຊະນັມຫິ ອະມັຕຕັນຍຸງ *ກຸສີຕັງ ຫີນະວີຣິຍັງ*
ຕັງເວ ປະສະຫະຕີ ມາໂຣ *ວາໂຕ ຣຸກຂັງວະ ທຸພພະລັງ (1.7)*

* ຄົນມັກເຫັນອາຣົມນ໌ວ່າງາມ ຢູ່ ບໍ່ຣະມັດຣະວັງແລ້ວ ໃນອິນທຣີຍະ (ອິນຊີ) ທັງຫລາຍ ບໍ່ຮູ້ຈັກປະມານການກິນ ຂີ້ຄ້ານ ມີຄວາມພຽນເສື່ອມຊາມ ນັ້ນແລ ມາຣຍ່ອມກຸກກວນ ໄດ້ ຄ້ານດັ່ງລົມແຮງ ພັດຟາດກົກໄມ້ທີ່ບໍ່ແຂງແຮງ (ໃຫ້ໂຄ່ນລົງ) ໄດ້ ສັນນັ້ນ.

Celui qui se complait dans les plaisirs matériels, et dont les sens sont insoumis, qui est immodéré dans sa nourriture, paresseux, inactif; celui-là, en vérité, est renversé par Mara comme l'est un faible arbuste par le vent.



Death overpowers not the steadfast thinker just as the wind does not tremble a firm rock.

8. *Asubhānupassiṁ viharantaṁ*
indriyēsu susaṁvutaṁ
bhōjanaṁhi ca mattaññuṁ
saddhaṁ āraddha viriyaṁ
taṁ vē nappasahati mārō
vātō sēlaṁ'va pabbataṁ (1:8)


The man who lives meditating on
"the impurities" with senses restrained,
in food moderate,
with confidence and strenuous effort,
Mara cannot overthrow as wind,
a rocky mountain.

(8) ອະສຸພານຸປັສສິງ ວິຫະຣັນຕັງ
ໂພຊະນັມຫິ ຈະ ມັຕຕັນຍຸງ
ຕັງ ເວນັປປະສະຫະຕິ ມາໂຣ

ອິນທຣິເຍສຸ ສຸສັງວຸຕັງ
ສັທທັງ ອາຣັທທະວິຣິຍັງ
ວາໂຕ ເສລັງວະ ປັພພະຕັງ (1.8)

* (ແຕ່ວ່າ) ຄົນມັກເຫັນອາຣົມຣ໌ ວ່າບໍ່ງາມຢູ່ ຣະມັດຣະວັງດີແລ້ວ ໃນອິນທຣີຍະ (ອິນຊີ) ທັງຫລາຍ, ຮູ້ຈັກປະມານໃນການກິນ, ມີຄວາມເຊື່ອ, ມີຄວາມພຽນ ຕັ້ງແຮກຂຶ້ນແລ້ວ ນັ້ນ ມາຣຍ່ອມກຸກກວນບໍ່ໄດ້ ດ້ານດັ່ງລົມແຮງ ພັດຟາດເຂົາຫີນ (ໃຫ້ເໜັງຕີງ) ບໍ່ໄດ້ ສັນນັ້ນ.

Contre celui qui ne vit point pour les seuls plaisirs et dont les sens sont soumis à la raison; qui est modéré dans sa nourriture, plein de foi et persévérance, contre celui-là, vraiment, Mara ne peut davantage que ne peut le vent contre un rocher.



Those who are tainted, unrestrained and devoid of truthfulness do not deserve the robe.

9. *Anikkasāvō kāsāvaṁ*
yō vatthaṁ paridahessati
apētō damasaccēna
na sō kāsāvamarahati (1:9)

Whosoever, not freed from stain,
void of self-control and truth,
should don the yellow robe,
is not worthy of it.

(9) *ອະນິກກາສາໂວ ກາສາວັງ* *ໂຍ ວັຕຖັງ ປະຣິທະເຫສສະຕິ*
ອະເປໂຕ ທະມະສັຈເຈນະ *ນະ ໂສ ກາສາວະມະຣະຫະຕິ* (1.9)

* ຄົນໃດ ບໍ່ແມ່ນ ຜູ້ມີກິເລສດັ່ງນ້ຳຝາດອອກແລ້ວ ປາສຈາກຄວາມຂົ່ມໃຈ ແລະສັຈຈະ ຈັກນຸ່ງຫົ່ມຜ້າກາສາວະ ຄົນນັ້ນ ຍ່ອມບໍ່ສົມຄວນ (ນຸ່ງຫົ່ມ) ຜ້າກາສາວະ.

Est indigne de porter la robe jaune, celui qui n'est point purifié de ses souillures, qui manque de modération et de loyauté.



The taintless and firm in conduct, restrained and truthful, are worthy of the stained robe.

10. *Yō ca vaṇtakasāvassa*
sīlēsu susamāhitō
upētō damasaccēna
sa vē kāsāvamarahati (1:10)

He who vomitted all impurities,
in morals well-established, and
endowed with self-control and truth,
is indeed worthy of the yellow robe.

(10) ໂຍ ຈະ ວັນຕະກະສາວັສສະ
ອຸເປໂຕ ທະມະສັຈເຈນະ

ສີເລສຸ ສຸສະມາຫິໂຕ
ສະ ເວ ກາສາວະມະຣະຫະຕິ (1.10)

* ສ່ວນວ່າ ຄົນໃດ ເປັນຜູ້ມີກິເລສດັ່ງນ້ຳຝາດ ອັນຄາຍແລ້ວ ຕັ້ງໝັ້ນດີແລ້ວໃນສີລ ທັງຫຼາຍເຂົ້າເຖິງແລ້ວ (ມີ) ຄວາມຂົ່ມໃຈ ແລະ ສັຈຈະ ຄົນນັ້ນແລ ຈຶ່ງຄວນ (ນຸ່ງຫົ່ມ) ຜ້າກາສາວະ.

Mais celui qui s'est purifié, qui est resté fermé dans la vertu, qui a le controle de soi-même et qui cultive la tempérance et la vérité; celui-là est vraiment digne de porter la robe jaune.



Those who view the unreal as real and the real as unreal reach not upto the real, misled as they are.

11. *Asārē sāramatinō*
sārē cā sāradassinō
tē sāraṁ nādhigacchanti
micchā saṅkappagōcarā (1:11)

In the unreal, they imagine the real,
in the real they see the unreal,
they who abide in the pasture-ground
of wrong thoughts, never arrive at the real.

(11) *ອະສາເຣ ສາຣະມະຕິໂນ*
ເຕ ສາຣັງ ນາທິຄັຈສັນຕິ

ສາເຣ ຈະ ອະສາຣະທັສສິໂນ
ມິຈສາ ສັງກັປປະໂຄຈະຣາ (1.11)

* ຄົນທັງຫລາຍເຫລົ່າໃດ ມີຄວາມຮູ້ໃນສິ່ງທີ່ບໍ່ເປັນສາຣະ (ແກ່ນສາຣ) ວ່າມີສາຣະ ມີຄວາມເຫັນໃນສິ່ງທີ່ມີສາຣະ ວ່າບໍ່ມີສາຣະ ຄົນທັງຫລາຍເຫລົ່ານັ້ນ ເຂົາມີແຕ່ ຄວາມຄິດທີ່ຜິດ ເປັນແລວທາງຍ່ອມບໍ່ເຖິງສາຣະທັມ (ແກ່ນທັມ).

Tant que prenant l'erreur pour la vérité et la vérité pour l'erreur, on possède un mental faux, on n'arrivera pas à la vérité, et on aura que de vains désirs.



Viewing the real as real, the unreal as unreal, they being correctly guided, reach the real.

12. *Sāraṅ ca sāratō ñatvā*
asāraṅ ca asāratō
tē sāraṁ adhigacchanti
sammā sankappa gōcarā (1:12)

What is real they deem as real,
What is unreal they deem as unreal;
They who abide in the pasture-ground
of right thoughts, arrive at the real.

(12) ສາຣັນຈະ ສາຣະໂຕ ຍັຕວາ
ເຕ ສາຣັງ ອະທິຄັຈສັນຕິ

ອະສາຣັນຈະ ອະສາຣະໂຕ
ສັມມາສັງກັປປະໂຄຈະຣາ (1.12)

* ຄົນທັງຫລາຍເຫລົ່າໃດ ຮູ້ ສິ່ງທີ່ມີສາຣະ ວ່າເປັນຂອງມີສາຣະ ແລະ ສິ່ງທີ່ບໍ່ມີສາຣະ ວ່າ ເປັນຂອງບໍ່ມີສາຣະ ຄົນທັງຫລາຍເຫລົ່ານັ້ນ ມີແຕ່ຄວາມຄິດທີ່ຖືກເປັນແລວທາງ ຍ່ອມເຖິງສາຣະທັມ (ແກ່ນທັມ).

Mais si l'on reconnait pour juste ce qui est juste, et pour faux ce qui est faux, on parvient à la vérité, et l'on poursuit de justes désirs.



Lust pierces the undeveloped and uncultured mind like rain the ill-thatched roof.

13. *Yathā'gāraṁ ducchannaṁ*
vuṭṭhī samativijjhati
ēvaṁ abhāvitaṁ cittaṁ
rāgō samativijjhati (1:13)

Even as rain penetrates
an ill-thatched house,
so does lust penetrate an
undeveloped mind.

(13) *ຍະຖາ ອະຄາຣັງ ທຸຈສັນນັງ ວຸຕຖິ ສະມະຕິວິຊຊະຕິ*
ເອວັງ ອະພາວິຕັງ ຈິຕຕັງ ຣາໂຄ ສະມະຕິວິຊຊະຕິ (1.13)

* ຝົນຍ່ອມຮົ່ວລົງປຽກເຮືອນ ທີ່ເຂົາມຸງບໍ່ດີແລ້ວ ໄດ້ສັນໃດ ຣາຄະຍ່ອມຮົ່ວປຽກ ຈິຕ ທີ່ເຂົາບໍ່ໄດ້ອົບຮົມແລ້ວ ສັນນັ້ນ.

De même que la pluie entre dans une maison dont le chaume est disjoint, ainsi le passionnel pénètre un mental instable.



Lust pierces not the developed and cultured mind as rain does not the well-thatched roof.

14. *Yathā gāraṁ succhannaṁ*
vuṭṭhī na samativijjhati
ēvaṁ subhāvitaṁ cittaṁ
rāgō na samativijjhati (1:14)

Even as rain does not penetrate
a well-thatched house, so does
lust not penetrate
a well-developed mind.

(14) *ຍະຖາ ອະຄາຣັງ ສຸສັນນັງ* *ວຸຕຖິ ນະ ສະມະຕິວິຊຊະຕິ*
ເອວັງ ສຸພາວິຕັງ ຈິຕຕັງ *ຣາໂຄ ນະ ສະມະຕິວິຊຊະຕິ (1.14)*

* ຝົນ ຍ່ອມຣົ່ວລົງປຽກເຮືອນ ທີ່ເຂົາມຸງດີແລ້ວ ບໍ່ໄດ້ສັນໃດ ຣາຄະ ຍ່ອມຣົ່ວປຽກຈິຕ
ທີ່ເຂົາອົບຣົມດີແລ້ວ ບໍ່ໄດ້ສັນນັ້ນ.

De même que la pluie n'entre pas dans une maison bien couverte de chaume, ainsi le passionnel ne pénètre pas un mental équilibré.



Seeing one's own impure action the evil doer grieves and is vexed here and hereafter.

15.

Idha sōcati pecca sōcati
pāpakārī ubhayattha sōcati
sō sōcati sō vihaññati
disvā kammakiliṭṭham attanō (1:15)

Here he grieves, hereafter he grieves,
In both worlds the evil-doer grieves.
He grieves and perishes,
seeing his own impure deed.

(15) *ອິທະ ໂສຈະຕິ ເປຈຈະ ໂສຈະຕິ* *ປາປະກາຣີ ອຸພະຍັຕຖະ ໂສຈະຕິ*
ໂສ ໂສຈະຕິ ໂສ ວິຫັນຍະຕິ *ທິສະວາ ກັມມະກິລິຕຖະມັຕຕະໂນ* (1.15)

* ຜູ້ເຮັດບາບ ຍ່ອມໂສກເສົ້າ ໃນໂລກທັງສອງ ຄື ໂສກເສົ້າຢູ່ໃນໂລກນີ້ ລ່ວງລັບໄປແລ້ວ ກໍຍັງຍ່ອມໂສກເສົ້າ ເຂົາໂສກເສົ້າຢູ່ ເຂົາເດືອດຮ້ອນຢູ່ ຍ້ອນວ່າຫລິງເຫັນກັມເສົ້າໝອງຂອງຕົນເອງ.

L'être malfaisant se lamente en ce monde, et se lamente dans l'autre. Dans les deux états, il se lamente. Il gémit, il est affligé devant la laideur de ses actes.



Seeing the purity of one's own action the doer of good continues to rejoice in both worlds.

16. *Idha mōdati pecca mōdati*
katapuññō ubhayattha mōdati
sō mōdati sō pamōdati
disvā kammavisuddhimattanō (1:16)

Here he rejoices, herafter he rejoices,
In both worlds the good doer rejoices.
He rejoices exceedingly seeing
his own pure deeds.

(16) *ອິທະ ໂມທະຕິ ເປຈຈະ ໂມທະຕິ*
ກະຕະປຸນໂຍ ອຸພະຍັຕຖະ ໂມທະຕິ
ໂສ ໂມທະຕິ ໂສ ປະໂມທະຕິ
ທິສະວາ ກັມມະສຸທທະມັຕຕະໂນ (1.16)

* ຜູ້ໃດ ສ້າງບຸນໄວ້ແລ້ວ ຍ່ອມເບີ່ງໃຈໃນສອງໂລກ ຄື ເບີ່ງໃຈຢູ່ໃນໂລກນີ້ ລ່ວງລັບໄປໄປແລ້ວ ກໍຍັງຍ່ອມເບີ່ງໃຈ ເຂົາເບີ່ງໃຈຢູ່ ເຂົາມ່ວນຊື່ນຢູ່ ຍ້ອນວ່າ ຫລິງເຫັນກັມອັນບໍຣິສຸທຂອງຕົນ.

Il est heureux dans ce monde, il est heureux dans l'autre, celui qui a bien agi. Il est heureux ici et là, devant la pureté de ses actes.



The evil doer suffers here and hereafter and more so when he is born in realms of woe.

17.

Idha tappati pecca tappati
pāpakārī ubhayattha tappati
pāpaṁ mē katan'ti tappati
bhiyyō tappati duggatiṁ gatō (1:17)

Here he laments, hereafter he laments,
In both worlds the evil-doer laments.
' Evil have I done ' thus he laments. Still more
he is lamenting, having gone to states of woe.


(17)

ອິທະ ຕັປປະຕິ ເປຈຈະ ຕັປປະຕິ
ປາປັງ ເມ ກະຕັນຕິ ຕັປປະຕິ

ປາປະກາຣີ ອຸພະຍັຕຖະ ຕັປປະຕິ
ພິຍໂຍ ຕັປປະຕິ ທຸຄຄະຕິງ ຄະໂຕ (1.17)

* ຜູ້ເຮັດຄວາມຊົ່ວ ຍ່ອມເດືອດຮ້ອນໃນໂລກນີ້ ຕາຍໄປແລ້ວກໍຍ່ອມເດືອດຮ້ອນ (ໃນໂລກອື່ນ) ຍ່ອມເດືອດຮ້ອນໃນໂລກທັງສອງ ຍ່ອມເດືອດຮ້ອນວ່າ ເຮົາໄດ້ເຮັດຄວາມຊົ່ວໄວ້ແລ້ວ ໄປສູ່ທຸຄຄະຕິ ຍ່ອມເດືອດຮ້ອນຍິ່ງຂຶ້ນອີກ.

Celui qui a fait le mal souffre dans ce monde, il souffre dans l'autre. Dans les deux états, il souffre. La pensée qu'il a fait le mal le poursuit; et son tourment grandit encore quand il entre dans les cercles de Niraya.



The doer of good is happy here and hereafter and happier when born in a blissful state.


18. *Idha nandati, pecca nandati*
katapuññō ubhayattha nandati
puññaṁ mē katan ti nandati
bhiyyō nandati suggatiṁ gatō (1:18)

Here he is glad, hereafter he is glad,
in both worlds the good doer is glad.
" Good have I done ' thus he is glad,
having gone to states of bliss.

(18) *ອິທະ ນັນທະຕິ ເປຈຈະ ນັນທະຕິ*
ກະຕະປຸນໂຍ ອຸພະຍັຕຖະ ນັນທະຕິ
ປຸນຍັງ ເມ ກະຕັນຕິ ນັນທະຕິ
ພິຍໂຍ ນັນທະຕິ ສຸຄຄະຕິງ ຄະໂຕ (1.18)

* ຜູ້ເຮັດຄວາມດີໄວ້ ຍ່ອມມ່ວນຊື່ນໃນໂລກນີ້ ຕາຍໄປແລ້ວກໍຍ່ອມມ່ວນຊື່ນ (ໃນໂລກໜ້າ) ຍ່ອມມ່ວນຊື່ນໃນໂລກທັງສອງ ຍ່ອມມ່ວນຊື່ນວ່າ ເຮົາໄດ້ເຮັດຄວາມດີໄວ້ແລ້ວ ໄປສູ່ສຸຄຄະ ຕິ ຍ່ອມມ່ວນຊື່ນຍິ່ງຂຶ້ນອີກ.

Celui qui fait le bien est heureux dans ce monde, est heureux dans le suivant, dans les deux états il est heureux. La pensée qu'il a fait, le bien le réconforte. Plus grand encore est son bonheur quand il entre dans les cercles des Devas (êtres célestes).



Reciting Dhamma, without practice of it; is fruitless like a cowherd's count of another's cattle.

19. *Bahumpi cē sahitaṁ bhāsamānō*
na takkarō hōti narō pamattō
gōpō'va gāvō gaṇayaṁ parēsaṁ
na bhāgavā sāmaññassa hōti (1:19)

Though much he recites the sacred, Texts but
cts not accordingly, that heedless man is like
cowherd who counts others'kine:
he has no share in the blessings of a recluse.

(19) *ພະຫຸມປິ ເຈ ສະຫິຕັງ ພາສະມາໂນ ມະຕັກກະໂຣ ໂຫຕິ ນະໂຣ ປະມັຕໂຕ*
ໂຄໂປວະ ຄາໂວ ຄະນະຍັງ ປະເຣສັງ ນະ ພາຄະວາ ສາມັນຍັສສະ ໂຫຕິ (1.19)

* ຖ້າວ່າ ຄົນເວົ້າທັມມະທີ່ມີປະໂຍຊນ໌ ເຖິງຈະຫລາຍ ແຕ່ເປັນຄົນປະມາທ ບໍ່ໄດ້ເຮັດ (ປະພຶດ) ທັມມະນັ້ນເລີຍ ຍ່ອມເປັນຜູ້ບໍ່ມີສ່ວນແຫ່ງສາມັນຍະຜົລ ທໍ່ກັບຄົນລ້ຽງງົວ ນັບງົວທັງຫລາຍໃຫ້ຜູ້ອື່ນຢູ່ ນັ້ນແລ.

Si un homme parle beaucoup de la Doctrine mais n'agit pas en conséquence, il est à peine meilleur que le vacher qui sait seulement compter le bétail des autres. Il n'est pas un disciple du Béni.



Practice of Dhamma, with less of recital, totally unattached, qualifies one for recluseship.

20. *Appaṁ pi cē sahitaṁ bhāsamānō*
dhammassa hōti anudhammacārī
rāgañ ca dōsañ ca pahāya mōhaṁ
sammappajānō suvimuttacittō
anupādiyānō idha vā huraṁ vā
sa bhāgavā sāmaññassa hōti (1:20)

Though little he recites the Sacred Texts
but acts in accordance with The Teaching,
Foresaking, lust, hatred, and ignorance,
truly knowing, with mind totally freed,
clinging to naught here and hereafter,
he shares the blessings of a recluse.

(20) *ອັປປັມປິ ເຈ ສະຫິຕັງ ພາສະມາໂນ*
ຣາຄັນຈະ ໂທສັນຈະ ປະຫາຍະ ໂມຫັງ
ອະນຸປາທິຍາໂນ ອິທະ ວາ ຫຸຣັງ ວາ

ທັມມັສສະ ໂຫຕິ ອະນຸທັມມະຈາຣີ
ສັມມັປປະຊາໂນ ສຸວິມຸຕຕະຈິຕໂຕ
ສະ ພາຄະວາ ສາມັນຍັສສະ ໂຫຕິ (1.20)

* ຖ້າວ່າ ຄົນເວົ້າທັມມະທີ່ມີປະໂຍຊນ໌ ເຖິງແມ່ນຈະໜ້ອຍ ແຕ່ເປັນຜູ້ປະພຶດທັມ
ຕາມສົມຄວນແກ່ທັມຢູ່ ລະຣາຄະ ໂທສະ ແລະ ໂມຫະ ເສັຽໄດ້ ເປັນຜູ້ຮູ້ຄັກແທ້
ມີຈິຕນິ້ມແລ້ວຢ່າງດີ ບໍ່ຖືແໜັນໃນໂລກນີ້ ຫຼື ໃນໂລກອື່ນໆ ຍ່ອມເປັນຜູ້ມີສ່ວນ
ແຫ່ງສາມັນຍະຜົລ.

Si un homme parle peu de la Doctrine et cependant en pratique les préceptes, rejetant toute convoitise, toute haine et toute illusion; s'il possède la vraie connaissance et le mental totalement affranchi de tous les liens, s'il n'est à rien de ce monde ou de n'importe quel autre; celui-là est un disciple du Béni.

2. ອັປປະມາທະ ວັຄ



Heedfulness and diligence are the way to Nibbāna. The heedless are like unto the dead.

21. *Appmādō amatapadaṁ*
pamādō maccunō padaṁ
appamattā na mīyanti
yē pamattā yathā matā. (2:1)

Heedfulness is the path to the deathless,
heedlessness is the path to death.
The heedful do not die,
the heedless are like the dead.

(21) *ອັປປະມາໂທ ອະມະຕັງ ປະທັງ*
ປະມາໂທ ມັຈຈຸໂນ ປະທັງ
ອັປປະມັຕຕາ ນະ ມີຍັນຕິ
ເຍ ປະມັຕຕາ ຍະຖາ ມະຕາ (2.1)

* ຄວາມບໍ່ພມາທ ເປັນທາງແຫ່ງຄວາມບໍ່ຕາຍ ຄວາມພມາທ ເປັນທາງແຫ່ງຄວາມຕາຍ ຄົນທັງຫາຍຜູ້ບໍ່ພມາທແລ້ວ ຊື່ວ່າ ບໍ່ຕາຍ ຄົນທັງຫລາຍເຫລົ່າໃດ ພມາທແລ້ວ ຄົນທັງຫລາຍເຫລົ່ານັ້ນ ຊື່ວ່າ ດ້ານດັ່ງ ຄົນຕາຍແລ້ວ.

La vigilance est le sentier du Nibbana. La négligence est le sentier de la mort. Ceux qui sont vigilants ne meurent pas. Ceux qui sont négligents sont déjà morts.



The wise, delighting in the way of the Noble Ones, rejoice in heedfulness.


22. *Ētaṁ visēsatō ñatvā*
appamādamhi paṇḍitā
appamādē pamōdanti
ariyānaṁ gōcarē ratā. (2:2)

Distinctly understanding this (difference),
the wise in heedfulness,
rejoice in heedfulness,
delighting in the realm of the Ariyas.

(22) *ເອຕັງ ວິເສສະໂຕ ຍັຕວາ* *ອັປປະມາທັມຫິ ປັນທິຕາ*
ອັປປະມາເທ ປະໂມທັນຕິ *ອະຣິຍານັງ ໂຄຈະເຣ ຣະຕາ (2.2)*

* ບັນດິຕ ທັງຫລາຍ ຮູ້ຄວາມຂໍ້ນີ້ໂດຍຄວາມຕ່າງກັນແລ້ວ ມ່ວນຢູ່ໃນຄວາມບໍ່ຜມາທ
ຍິນດີແລ້ວໃນທັມ ອັນເປັນແລວທາງຂອງພຣະອະຣິຍະເຈົ້າທັງຫຼາຍ.

Bien établis dans cette connaissance, ceux qui sont avancés dans la vigilance s'y délectent et ils se complaisent dans la façon de vivre des Ariyas.



The steady and constant meditator wins the supreme security and bliss of Nibbāna.

23. *tē jhāyinō sātatikā*
niccaṁ dalhaparakkamā
phusanti dhīrā nibbāṇaṁ
yōgakkhēmaṁ anuttaraṁ. (2:3)


The ever meditative,
the ever steadfastly persevering wise ones
realise Nibbana, free of bonds,
the highest state.

(23) *ເຕ ຊາຍີໂນ ສາຕະຕິກາ*
ຜຸສັນຕິ ທີຣາ ນິພພານັງ

ນິຈຈັງ ທັລຫະປະຣັກກະມາ
ໂຍຄັກເຂມັງ ອະນຸຕຕະຣັງ (2.3)

* ທ່ານເຫລົ່ານັ້ນ ເປັນປຣາຊພຣຸນເພັງຢູ່ບໍ່ຂາດ ມີຄວາມບາກບັ່ນຢ່າງໝັ້ນຄົງ ເນືອງນິຈ ຍ່ອມໄດ້ສັມຜັສ ພຣະນິພພານ ເປັນທາງປາສຈາກກິເລສ ອັນຍອດຍັຽມ.

Ceux qui sont sages, méditatifs, persévérants, luttant contre eux-mêmes sans relache, atteignent au Nibbana qui est la félicité suprême.



Mindful and striving, pure, restrained and righteous, man advances to fame and prosperity.

24. *Uṭṭhānavatō satimatō*
sucikammassa nisammakārinō
saññatassa ca dhammajīvinō
appamattassa yaso'bhivaḍḍhati (2:4)

Continually increases the glory of him who is energetic, mindful, pure in deed, discriminative, self-controlled, right-living and heedful.

(24) ອຸຕຖານະວະໂຕ ສະຕິມະໂຕ
ສຸຈິກັມມັສສະ ນິສັມມະກາຣິໂນ
ສັນຍະຕັສສະ ຈະ ທັມມະຊີວິໂນ
ອັປປະມັຕຕັສສະ ຍະໂສພິວັທທະຕິ (2.4)

* ຍົສຍ່ອມຈະເຣີນແກ່ຜູ້ມີຄວາມດໝັ່ນ ມີສະຕິ ມີວຽກການສະອາດ ຣີ່ນຕອງດີແລ້ວ
ຈຶ່ງເຮັດ ຣະມັດຣະວັງດີ ເປັນຢູ່ຖືກທັມ ແລະ ບໍ່ຜມາທແລ້ວ.

Quiconque sait entretenir son zèle, rester pur en ses actions, agir d'une manière réfléchie, restreindre ses passions, vivre selon la morale, celui-là verra grandir sa bonne renommée.



Striving, diligent and restrained, let every wise man make for himself an unassailable island.

25. *Uṭṭhānēn 'appamādēna*
saññamēna damēna ca
dīpaṁ kayirātha medhāvī
yaṁ ōghō nābhikīrati. (2:5)

By effort, earnestness, discipline,
and self-control, let the wise man make
for himself an island which
no flood can overwhelm.

(25) *ອຸຕຖາເນນັປປະມາເທນະ ສັນຍະເມນະ ທະເມນະ ຈະ*
ທີປັງ ກະຍິຣາຖະ ເມທາວີ ຍັງ ໂອໂຄ ນາພິກີຣະຕິ (2.5)

* ກິເລສອັນດຸດດັ່ງວັງນ້ຳເລິກ ຖ້ວມທີ່ເພິ່ງອັນໃດບໍ່ໄດ້ ຜູ້ມີປັນຍາຄວນສ້າງທີ່ເພິ່ງ ອັນນັ້ນ ດ້ວຍຄວາມດຸໝັ່ນ ດ້ວຍຄວາມບໍ່ຜມາທ ດ້ວຍຄວາມຣະມັດຣະວັງ ແລະ ດ້ວຍຄວາມເຝິກຝົນຕົນ (໒໕).

Par sa diligence, sa vigilance, sa maîtrise de soi, l'homme éclairé doit se faire une île que les flots ne pourront jamais submerger.



While the ignorant are heedless, the wise guard heedfulness like a valued treasure.

26. *Pamādamanuyuñjanti*
bālā dummedhinō janā
appamādañca mēdhāvī
dhanaṁ seṭṭhaṁ'va rakkhati. (2:6)

The ignorant, foolish folk indulge
in heedlessness;
but the wise man guards earnestness
as the greatest treasure.

(26) *ປະມາທະມະນຸຍຸນຊັນຕິ* *ພາລາ ທຸມເມທິໂນ ຊະນາ*
ອັປປະມາທັນຈະ ເມທາວີ *ທະນັງ ເສຕຖັງວະ ຣັກຂະຕິ* (2.6)

* ຄົນທັງຫລາຍ ທີ່ເປັນພາລ ມີປັນຍາຊົ່ວ ຍ່ອມສຸມສິ້ວຄວາມຜມາທຢູ່ເລື້ອຍໆ ສ່ວນຜູ້ມີ
ປັນຍາ ຍ່ອມຣັກສາຄວາມບໍ່ຜມາທຕ້ານດັ່ງຄົນມີຊັພ ຣັກສາຊັພອັນປະເສີດໄວ້ ທັ້ນແລ.

Les insensés, dans leur manque de sagesse, s'abandonnent à la négligence. Le vrai sage conserve la vigilance comme son trésor le plus précieux.



Delight not in sensuality or heedlessness. Diligently contemplative, one wins immense bliss.

27. *Mā pamādamanuyuñjētha*
mā kāmaratisanthavaṁ
appamattō hi jhāyantō
pappōti vipulaṁ sukhaṁ (2:7)

Indulge not in wantonness, have no intimacy with sensuous delights. The earnest, meditative person obtains abundant bliss.

(27) ມາ ປະມາທະມະນຸຍຸນເຊຖະ
ອັປປະຕັຕໂຕ ຊາຍັນໂຕ

ມະ ກາມະຣະຕິສັນຖະວັງ
ປັປໂປຕິ ວິປຸລັງ ສຸຂັງ (2.7)

* ທ່ານທັງຫລາຍ ຈົ່ງຢ່າສຸມສົ້ວຄວາມຜມາທ ຈົ່ງຢ່າໝັ່ນປະກອບນຳຄວາມຊົມຊື່ນ ຄື ຍິນດີໃນກາມ ເພາະວ່າ ຜູ້ບໍ່ຜມາທແລ້ວ ພິນິດພິຈາຣະນາຢູ່ ຍ່ອມເຖິງສຸຂອັນໄພບູລ.

Ne vous laissez pas aller à l'insouciance, ni aux plaisirs de sens. Celui qui est adonné à la méditation fait une ample moisson d'allégresse.



The wise and worthy, griefless and diligent, ascend high to view the grieving folk below.

28. *Pamādaṁ appamādēna*
yadā nudati paṇḍitō
paññāpāsādamaruyha
asōkō sōkiniṁ pajaṁ
pabbataṭṭhō'va bhummaṭṭhē
dhīrō bālē avekkhati. (2:8)

When the sagacious one casts away
wantonness by sanity,
this sorrowless wise one ascends
the palace of wisdom and beholds
the ignorant sorrowing folk
like a mountaineer, the groundlings.

(28) *ປະມາທັງ ອັປປະມາເທນະ*
ປັນຍາປາສາທະມາຣຸຍຫະ
ປັພພະຕັຕໂຖວະ ພຸມມັຕເຖ

ຍະຖາ ນຸທະຕິ ປັນທິໂຕ
ອະໂສໂກ ໂສກິນິງ ປະຊັງ
ທີໂຣ ພາເລ ອາເວກຂະຕິ (2.8)

* ເມື່ອໃດ ບັນດິຕຍ່ອມຜ່ອນເບົາຄວາມຜມາທ ດ້ວຍຄວາມບໍ່ຜມາທ ເມື່ອນັ້ນ ບັນດິຕ ໄດ້ຂຶ້ນສູ່ຜາສາທ ຄື ປັນຍາ ເປັນຜູ້ບໍ່ມີໂສກເສົ້າ ຍ່ອມຫລຽວເຫັນປະຊາ ຜູ້ຍັງມີຄວາມ ໂສກເສົ້າ ມັກປຣາຊ ຍ່ອມເຫັນຄົນພາລທັງຫລາຍ ປຸນດັ່ງຄົນຢືນຢູ່ເທິງພູ ຫລຽວເຫັນ ຄົນຢືນຢູ່ພື້ນດິນ ທັ້ນແລ.

Lorsque l'homme vigilant se débarrasse de la négligence, monte sur les terrasses de la sagesse, il regarde d'en haut les insensés. Il contemple avec sérénité les foules affligées, comme un montagnard aperçoit les gens de la plaine.



Diligent and awake, the wise outrun the heedless, like a swift horse a weak one.

29. *Appamattō pamattēsu*
suttēsu bahujāgarō
abalassaṁ'va sīghassō
hitvā yāti sumēdhasō (2:9)

Heedful amongst the heedless,
wide awake amongst the sleepy,
the wise man advances like a swift horse,
leaving a weak jade behind.

(29) ອັປປະມັຕໂຕ ປະມັຕເຕສຸ
ອະພະລັສສັງວະ ສີຄັສໂສ

ສຸຕເຕສຸ ພະຫຸຊາຄະໂຣ
ຫິຕວາ ຍາຕິ ສຸເມທະໂສ (2.9)

* ຜູ້ມີປັນຍາດີ ເມື່ອຜູ້ອື່ນຜມາທແລ້ວ ເພິ່ນບໍ່ຜມາທ ເມື່ອຜູ້ອື່ນຫລັບແລ້ວ ເພິ່ນຕື່ນຢູ່ ເປັນສ່ວນຫລາຍ ປ່ອຍປະ (ຄົນໂງ່) ໄປເສັຍ ຄື ກັບມ້າສີຕີນດີ ປ່ອຍປະມ້າບໍ່ມີ ກຳລັງ (ໄວ້ຂ້າງຫລັງ) ທັ້ນແລ.

Zèle parmi les insoucieux, éveillé parmi les somnolents,
le sage avance comme un coursier laissant derrière lui
la pauvre haridelle.



Heedfulness made Magha the king of dēvas. Heedfulness is forever praised.

30. *Appamādēna Maghavā*
dēvānaṁ seṭṭhataṁ gatō
appamādaṁ pasaṁsanti
pamādō garahitō sadā. (2:10)

By earnestness Sakka became
the chief of the Devas.
Earnestness is ever praised;
Wantonness is ever despised

(30) *ອັປປະມາເທນະ ມະຄະວາ*
ອັປປະມາທັງ ປະສັງສັນຕິ

ເທວານັງ ເສຕຖະຕັງ ຄະໂຕ
ປະມາໂທ ຄະຣະຫິໂຕ ສະທາ (2.10)

* ທ້າວມະຄະວາເທວະຣາຊ ເຖິງຄວາມເປັນຜູ້ປະເສີດກວ່າເທພຍຸດາທັງຫລາຍ ກໍຍ້ອນຄວາມບໍ່ພມາທ ບັນດິຕທັງຫລາຍ ຍ່ອມສໍຣະເສີນຄວາມບໍ່ພມາທ (ສ່ວນ) ຄວາມພມາທ ເພິ່ນຕິຕຽນທຸກເມື່ອທຸກຍາມ.

La vigilance est admirée. La négligence est blâmée. Par la vigilance, Indra s'est élevé au plus haut des rangs des dieux.



Like a burning fire, the heedful monk moves forward, destroying all bonds big and small.

31. *Appamādaratō bhikkhū*
pamādē bhayadassi vā
saṅñōjanaṁ aṇuṁ thūlaṁ
ḍahaṁ aggī va gacchati. (2:11)

The Bhikkhu who delights in earnestness
and looks with fear on negligence,
advances like fire,
burning all fetters, great and small.

(31) *ອັປປະມາທະຣະໂຕ ພິກຂຸ*
ສັນໂຍຊະນັງ ອະນຸງ ຖຸລັງ

ປະມາເທ ພະຍະທັສສີ ວາ
ທະຫັງ ອັຄຄີວະ ຄັຈສະຕິ (2.11)

* ພິກຂຸຜູ້ຍິນດີໃນຄວາມບໍ່ຜມາທ ຫລື ເປັນຜູ້ມັກເຫັນພັຍໃນຄວາມຜມາທ ຍ່ອມເຜົາສັງໂຍຊນ້ອຍໃຫຍ່ (ໃຫ້ສູນໄປ) ດ້ານດັ່ງໄຟ ເຜົາເຊື້ອໄຟນ້ອຍໃຫຍ່ (ໃຫ້ໝົດໄປ) ສະນັ້ນ.

Il se meut comme de la flamme, le Bhikkhu qui redoute la négligence et se réjouit dans la vigilance, et il voit bientôt toutes ses entraves tomber, grandes et petites, comme consumées.



The monk who delights in heedfulness never fails to win the Deathless.

32. *Appamādaratō bhikkhu*
pamādē bhayadassi vā
abhabbō parihāṇāya
nibbāṇass'ēva santikē. (2:12)

The Bhikkhu who delights in earnestness,
and looks with fear on negligence,
is not liable to fall;
he is in the presence of Nibbana.

(32) *ອັປປະມາທະຣະໂຕ ພິກຂຸ*
ອະພັພໂພ ປະຣິຫານາຍະ
ປະມາເທ ພະຍະທັສສີ ວາ
ນິພພານັສເສວະ ສັນຕິເກ (2.12)

* ພິກຂຸຜູ້ຍິນດີໃນຄວາມບໍ່ຜມາທ ຫລື ເປັນຜູ້ມັກເຫັນພັຍໃນຄວາມຜມາທ ບໍ່ທ່ອນທີ່ຈະເສື່ອມ ຈາກຄຸນທັມພິເສສ ແມ່ນຢູ່ໃກ້ພຣະນິພພານຄັກແນ່.

Le Bhikkhu qui se plait dans la vigilance, et redoute la négligence, ne peut plus déchoir. Il se rapproche du Nibbana.

3. ຈິຕຕະ ວັຄ



Like the fletcher the arrow the wise one straightens the fickle mind.

33. *Phandanaṁ capalaṁ cittaṁ*
durakkhaṁ dunnivārayaṁ
ujuṁ karōti mēdhāvī
usukārō'va tējanaṁ. (3:1)

The flickering, fickle mind,
difficult to guard, difficult to control,
the wise man straightens
as a fletcher, an arrow.

(33) *ຜັນທະນັງ ຈະປະລັງ ຈິຕຕັງ*
ທຸຣັກຂັງ ທຸນນິວາຣະຍັງ
ອຸຊຸງ ກະໂຣຕິ ເມທາວີ
ອຸສຸກາໂຣວະ ເຕຊະນັງ (3.1)

* ຜູ້ມີປັນຍາ ຍ່ອມເຮັດຈິຕ (ຄວບຄຸມຈິຕ) ທີ່ດິ້ນຣົນ ໄກວແກວ່ງ ຮັກສາໄດ້ຍາກ ຫັກຫ້າມໄດ້ຍາກ ໃຫ້ (ຊື່) ຕຣົງໄດ້ ດັ່ງຊ່າງທະນູສອນ ເບັດລູກສອນໃຫ້ຊື່ ສະນັ້ນ.

De même que celui qui fabrique les flèches veille à ce qu'elles soient droites, de même le sage redresse sa pensée hésitante et incertaine, difficile à garder droite, difficile à guider.



Like a fish out of its watery abode, this mind trembles at having to abandon Māra's realm.

34. *Vārijō'va thalē khittō*
ōkamōkata ubbhatō
pariphandat'idaṁ cittaṁ
māradheyyaṁ pahātavē. (3:2)


Like a fish that is drawn from its watery abode and thrown upon land, even so does this mind flutter. (Hence) should the realm of Passions be shunned.

(34) *ວາຣິໂຊວະ ຖະເລ ຂິຕໂຕ*
ປະຣິຜັນທະຕິທັງ ຈິຕຕັງ

ໂອກະໂມກະຕະອຸພພະໂຕ
ມາຣະເທຍຍັງ ປະຫາຕະເວ (3.2)

* ຈິຕທີ່ຍິນດີແລ້ວໃນກາມຄຸນນີ້ ຖືກເຂົາຍົກຂຶ້ນຈາກອາລັຍ (ຄິດເຖິງ) ຄື ກາມຄຸນ ເພື່ອຈະໃຫ້ລະວັຕຕະ ອັນເປັນທີ່ຕັ້ງແຫ່ງມານ ຍ່ອມດີ້ນຣົນ ປຸນດັ່ງ ປາທີ່ເຂົາຈັບຂຶ້ນຈາກບ່ອນຢູ່ຄືນ້ຳ ແລ້ວໂຍນຂຶ້ນໄປເທິງບົກ ດີ້ນດ່າວຢູ່ ສະນັ້ນ.

De même qu'un poisson rejeté hors de l'eau, notre esprit tremble et pantèle quand il abandonne le royaume de Mara.



It is well indeed restraining this fleeting, wandering mind. Such restraint brings happiness.

35. *Dunniggahassa ḷahunō*
yatthakāmanipātinō
cittassa damathō sādhu
cittaṁ dantaṁ sukhāvahaṁ. (3:3)

The mind is hard to check, swift, flits wherever it-list, the control thereof is good; a controlled mind is conducive to happiness.

(35) *ທຸນນິຄຄະຫັສສະ ລະຫຸໂນ* *ຍັຕຖະ ກາມະນິປາຕິໂນ*
ຈິຕຕັສສະ ທະມະໂຖ ສາທຸ *ຈິຕຕັງ ທັນຕັງ ສຸຂາວະຫັງ (3.3)*

* ການແອບເຝິກຈິຕທີ່ຂົ່ມໄດ້ຍາກ ທີ່ເບົາ (ຄືເກີດຂຶ້ນ ແລະ ດັບໄວ) ມັກຕົກໄປໃນອາຣົມນ໌ ແນວໃດແນວນຶ່ງຕາມໃຈມັກ ເປັນຄຸນໃຫ້ສຳເຣັດປໂຍຊ ຈິຕທີ່ແອບເຝິກໄດ້ດີແລ້ວ ພາເອົາ ຄວາມສຸຂມາໃຫ້.

Difficile à maîtriser, instable est le mental toujours en quête de jouissances. Il est bon de le dominer. Un mental dompté assure le bonheur.



The subtle and secretive mind, when well guarded, will yield happiness.

36. *Sududdasaṁ sunipuṇaṁ*
yatthakāmanipātinaṁ
cittaṁ rakkhētha mēdhāvī
cittaṁ guttaṁ sukhāvahaṁ. (3:4)

The mind is very hard to perceive, extremely subtle,
flits wherever it list.
Let the wise man guard it;
a guarded mind is conducive to happiness.

(36) *ສຸທຸທທະສັງ ສຸນິປຸນັງ* *ຍັຕຖະກາມະນິປາຕິນັງ*
ຈິຕຕັງ ຣັກເຂຖະ ເມທາວີ *ຈິຕຕັງ ຄຸຕຕັງ ສຸຂາວະຫັງ (3.4)*

* ຜູ້ມີປັນຍາ ຄວນຮັກສາຈິຕ ທີ່ເຫັນໄດ້ຍາກແສນຍາກ ສຸດລະອຽດອ່ອນ ມັກຕົກໄປໃນອາຣົມນ໌ແນວໃດແນວນຶ່ງຕາມໃຈມັກ ຈິຕທີ່ປົກຄອງກຸ້ມແລ້ວ (ຈິຕທີ່ຮັກສາເຝົ້າແອບຄຸ້ມຄອງໄວ້ດີແລ້ວ) ພາເອົາຄວາມສຸຂມາໃຫ້.

Que le sage reste maître de ses pensées, car elles sont subtiles et difficiles à saisir et toujours en quête de jouissances. Un mental bien guidé assure le bonheur.



Restraining the wandering, bodiless, cave-dwelling mind, one is freed from death's shackle.

37. *Dūraṅgamaṁ ēkacaraṁ*
asarīraṁ guhāsayaṁ
yē cittaṁ saññamessanti
mokkhanti Mārabandhanā. (3:5)

Faring far, wandering alone,
bodiless, lying in a cave, is the mind.
Those who subdue it are freed
from the bonds of Mara.

(37) ທູຣັງຄະມັງ ເອກະຈະຣັງ
ອະສະຣີຣັງ ຄຸຫາສະຍັງ
ເຍ ຈິຕຕັງ ສັນຍະເມສສັນຕິ
ໂມກຂັນຕິ ມາຣະພັນທະນາ (3.5)

* ຈິຕ ເຊິ່ງໄປຮັບອາຣົມນ໌ ໃນທີ່ໄກ ທ່ຽວໄປດວງດຽວ ບໍ່ມີຕົນໂຕ ມີຄູຫາ (ຖ້ຳ ຄື ຮ່າງກາຍ) ເປັນບ່ອນອາສັຍ ຄົນທັງຫລາຍເຫລົ່າໃດ ຈັກຣະວັງ (ຈິຕ) ໄດ້ ຄົນທັງຫລາຍເຫລົ່ານັ້ນ ຈັກພົ້ນຈາກບ້ວງ (ບ້ວງຜູກ) ຂອງມາຣ.

Errant au loin, solitaire, sans consistance et caché au plus profond du coeur, tel est le mental. Quiconque parvient à le soumettre, se libère des entraves.



A fickle mind, a shallow faith and ignorance of Dhamma lead not one to total wisdom.

38. *Anavaṭṭhitacittassa*
saddhammaṁ avijānatō
pariplavapasādassa
paññā na paripūrati. (3:6)

He whose mind is not steadfast,
he who knows not the Noble Doctrine,
he whose faith wavers,
the wisdom of such a one will never be perfect.

(38) *ອະນະວັຕຖິຕະ ຈິຕຕັສສະ*
ປະຣິປລະວະປະສາທັສສະ

ສັທທັມມັງ ອະວິຊານະໂຕ
ປັນຍາ ນະ ປະຣິປູຣະຕິ (3.6)

* ປັນຍາ ຍ່ອມບໍ່ບໍຣິບູນ (ສົມບູນ) ແກ່ຄົນຜູ້ມີຈິຕບໍ່ຫມັ້ນຄົງ ບໍ່ຮູ້ພຣະສັທທັມ ມີຄວາມ
ເຫລື້ອມໃສ ເລື່ອນລອຍ.

Chez les esprits changeants qui ignorent la vraie loi et manquent de sérénité, la sagesse ne vient pas à plénitude.



A vigilant, lustless, hateless mind which transcends good and evil, knows no fear.


39. *Anavassuta cittassa*
ananvāhatacētasō
puññapāpa pahīnassa
natthi jāgaratō bhayaṁ. (3:7)

He whose mind is not wetted (by lust).
He who is not affected (by hatred),
He who has discarded both good and evil:-
To such a vigilant one, there is no fear.

(39) *ອະນະວັສສຸຕະ ຈິຕຕັສສະ*
ອະນັນວາຫະຕະເຈຕະໂສ
ປຸນຍະປາປະ ປະຫີນັສສະ
ນັຕຖິ ຊາຄະຣະໂຕ ພະຍັງ (3.7)

* ພັຍ ຍ່ອມບໍ່ມີ ແກ່ຄົນຜູ້ມີຈິຕບໍ່ປຽກດ້ວຍຣາຄະ ມີຈິຕບໍ່ຕຳຕ້ອງ ໂທສະ ລະບຸນ ລະບາປໄດ້ ຮູ້ເມື່ອໂຕຢູ່.

Si les pensées d'un homme ne sont pas agitées, si son mental n'est pas troublé par le désir, s'il ne s'inquiète plus du bien et du mal, cet homme bien éveillé ne connait pas de crainte.



Win over the forces of evil with wisdom, fortifying your mind as a guarded city.


40. *Kumbhūpamaṁ kāyamimaṁ viditvā*
nagarūpamaṁ cittaṁidaṁ thapetvā
yōdhētha Māraṁ paññāyudhēna
jitañca rakkhē anivēsanō siyā. (3:8)

Realizing that this body is(as fragile) as a jar,
establishing his mind(as firm) as a (fortified)city,
He should attack Mara with the weapon of wisdom;
he should guard his conquest, and be without attachment.

(40) *ກຸມພູປະມັງ ກາຍະມິທັງ ວິທິຕວາ ນະຄະຣູປະມັງ ຈິຕຕະມິທັງ ຖະເກຕວາ*
ໂຍເທຖະ ມາຣັງ ປັນຍາວຸເທນະ ຊິຕັນຈະ ຣັກເຂ ອະນິເວສະໂນ ສິຍາ (3.8)

* ບຸຄຄົລຮູ້ແຈ້ງອັຕພາບຮ່າງກາຍນີ້ວ່າ (ແຕກງ່າຍ : ຕາຍໄວ) ເປັນດັ່ງໝໍ້ ກັ້ນກາງຈິຕນີ້, ໃຫ້ແໜັ້ນໜາ ເປັນດັ່ງເມືອງທີ່ມີກຳແພງປ້ອງກັນແລ້ວ ເພິງສູ້ຮົບມາຣ ດ້ວຍອາວຸທ ຄື ປັນຍາ ເພິງຮັກສາໄຊຊະນະໄວ້ ແຕ່ຢ່າເປັນຜູ້ຂ້ອງຄາ (ຫລົງ) ຢູ່.

Observant que le corps est fragile comme un vase et fortifiant, le mental comme une cite armée, attaquons Mara avec l'épée de la sagesse, et conservons, précieusement ce que nous avons acquis.



Soon this body will lie lifeless, bereft of consciousness, like a worthless log of burnt wood.

41. *Aciraṁ vat'ayaṁ kāyō*
paṭhaviṁ adhisessati
chuddhō apētaviññāṇō
niratthaṁ va kaliṅgaraṁ. (3:9)

Before long, alas! this body
will lie upon the earth; Cast aside,
devoid of consciousness,
even as a useless log.

(41) *ອະຈິຣັງ ວະຕະຍັງ ກາໂຍ*
ປະຖະວິງ ອະທິເສສສະຕິ
ສຸທໂທ ອະເປຕະວິນຍາໂນ
